**LOWELL PUBLIC SCHOOLS**
(ສຳນັກງານບໍລິຫານສ່ວນກາງ Henry J. Mroz)
155 Merrimack Street
Lowell, MA 01852

ວັນທີ 25 ມັງກອນ 2021

**ອັບເດດກ່ຽວກັບສະຖານະຂອງການສຶກສາພາຍໃນຫ້ອງຮຽນ**

ເຖິງບັນດານັກຮຽນ, ຄອບຄົວ ແລະ ເຈົ້າໜ້າທີ່ຂອງໂຮງຮຽນ Lowell Public Schools,

ໃນຂະນະທີ່ພວກເຮົາສືບຕໍ່ວາງແຜນກ່ຽວກັບການກັບຄືນໄປສູ່ການສຶກສາພາຍໃນຫ້ອງຮຽນ, ຄະນະກຳມະການປະຈຳໂຮງຮຽນໄດ້ປະຊຸມຮ່ວມກັບຄະນະກຳມະການດ້ານສຸຂະພາບປະຈຳເມືອງ Lowell ໃນວັນຈັນທີ 25 ມັງກອນ ເພື່ອປຶກສາຫາລືກ່ຽວກັບສະຖານະທີ່ເປັນຢູ່ໃນປະຈຸບັນຂອງພະຍາດອັກເສບປອດ ໂຄວິດ-19 (COVID-19) ທີ່ເມືອງ Lowell ແຫ່ງນີ້.

ຫຼັງຈາກທີ່ພິຈາລະນາປັດໃຈທັງໝົດ - ເຊິ່ງລວມໄປເຖິງທິດທາງຫຼ້າສຸດຂອງຂໍ້ມູນກ່ຽວກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ໃນຂັ້ນທ້ອງຖິ່ນ ພ້ອມທັງຄວາມສ່ຽງດ້ານສຸຂະພາບ ແລະ ຄວາມປອດໄພທີ່ກ່ຽວຂ້ອງກັບນັກຮຽນ, ເຈົ້າໜ້າທີ່ ແລະ ຊຸມຊົນໃນວົງກວ້າງ - ຄະນະກຳມະການປະຈຳໂຮງຮຽນໄດ້ລົງມະຕິພັກດັນໃຫ້ເອົາມື້ທຳອິດຂອງວັນທີທີ່ກຳນົດໄວ້ ເພື່ອເລີ່ມອະນຸຍາດໃຫ້ນັກຮຽນກັບຄືນໄປສູ່ການຮ່ຳຮຽນພາຍໃນຫ້ອງຮຽນ ນັບແຕ່ວັນທີ 1 ກຸມພາ ຫາ ວັນທີ 22 ກຸມພາ.

ດັ່ງນັ້ນ, ນັກຮຽນຂອງໂຮງຮຽນ Lowell Public Schools ທຸກຄົນ ແມ່ນຈະສືບຕໍ່ຮຽນໜັງສືຜ່ານຮູບແບບທາງໄກຕໍ່ໄປ ຢ່າງໜ້ອຍຕະຫຼອດຈົນຮອດອາທິດພັກຮຽນໃນເດືອນກຸມພາ, ໂດຍມີການແກ້ໄຂວັນທີທີ່ກຳນົດໄວ້ສຳລັບນັກຮຽນຜູ້ທີ່ຈະກັບເຂົ້າມາຮັບການສຶກສາພາຍໃນຫ້ອງຮຽນຄືດັ່ງຕໍ່ໄປນີ້:

- ວັນທີ 22 ກຸມພາ - ສຳລັບບັນດານັກຮຽນໃນໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງ ເຊິ່ງກ່ອນໜ້ານີ້ໄດ້ເຂົ້າຮ່ວມຮູບແບບການຮຽນການສອນໃນຫ້ອງຮຽນຂອງພວກເຮົາ
- ວັນທີ 1 ມີນາ - ສຳລັບບັນດານັກຮຽນຜູ້ທີ່ບໍ່ໄດ້ຢູ່ໃນໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງ, ແຕ່ກ່ອນໜ້ານີ້ໄດ້ເຂົ້າຮັບການສຶກສາພາຍໃນຫ້ອງຮຽນໃນສົກຮຽນນີ້ ເຊິ່ງເປັນສ່ວນໜຶ່ງຂອງແຜນເປີດການຮຽນການສອນຄືນໃໝ່ສະບັບເດີມຂອງພວກເຮົາ
- ວັນທີ 1 ເມສາ - ສຳລັບການຂະຫຍາຍຮູບແບບການຮຽນການສອນພາຍໃນຫ້ອງຮຽນຂອງພວກເຮົາ ເພື່ອໃຫ້ລວມເອົາບັນດານັກຮຽນເພີ່ມເຕີມນອກເໜືອຈາກທີ່ໄດ້ເຂົ້າຮັບການສຶກສາພາຍໃນໂຮງຮຽນເມື່ອຕົ້ນປີການສຶກສາຂອງສົກຮຽນນີ້

ສິ່ງສຳຄັນຄື ຕ້ອງຂໍຢໍ້າວ່າ: ບັນດາວັນທີເຫຼົ່ານີ້ແມ່ນບໍ່ໄດ້ກຳນົດໄວ້ຕາຍຕົວ. ພວກເຮົາຈະສືບຕໍ່ກວດສອບຂໍ້ມູນກ່ຽວກັບພະຍາດອັກເສບປອດ ໂຄວິດ-19 (COVID-19) ແລະ ທຳການປຶກສາຫາລືຮ່ວມກັບຄະນະກຳມະການດ້ານສຸຂະພາບ. ພ້ອມນັ້ນພວກເຮົາກໍຈະແຈ້ງຂໍ້ມູນອັບເດດຕ່າງໆໃຫ້ທ່ານຮັບຊາບຢ່າງແນ່ນອນ ໃນຂະນະທີ່ພວກເຮົາທຳການພິຈາລະນາເຖິງແຜນການຮຽນການສອນຂອງພວກເຮົາໃນອະນາຄົດຕໍ່ໄປ.

ພວກເຮົາຍັງຄົງຢາກຂອບໃຈສຳລັບການໃຫ້ຄວາມຮ່ວມມື ແລະ ການປັບຕົວຂອງພວກທ່ານ ໃນຂະນະທີ່ພວກເຮົາເອງກໍດຳເນີນງານໃຫ້ຜ່ານພົ້ນຄວາມບໍ່ແນ່ນອນທີ່ເກີດຂຶ້ນຢ່າງຕໍ່ເນື່ອງຂອງວິກິດການດ້ານສຸຂະພາບທີ່ບໍ່ເຄີຍພົບພໍ້ມາກ່ອນເຊັ່ນນີ້.

ດ້ວຍຄວາມນັບຖື ແລະ ຮັກແພງ,

Joel Boyd

Dr. Joel D. Boyd
Superintendent of Schools (ຜູ້ບໍລິຫານໂຮງຮຽນ)